# ວິທີການລົງຄະແນນສຽງ

VOTE 2020

*ການລົງຄະແນນຂອງທ່ານແມ່ນສຽງຂອງທ່ານ - ຈົດທະບຽນ, ໄດ້ຮັບການແຈ້ງໃຫ້ຊາບ, ໄປລົງຄະແນນສຽງ!*

## *ຜູ້ໃດສາມາດລົງຄະແນນສຽງ?*

ການຈະລົງຄະແນນສຽງໃນລັດມິນນິໂຊຕາ ທ່ານຈະຕ້ອງເປັນພົນລະເມືອງຂອງສະຫະລັດອະເມລິກາ, ມີອາຍຸຢ່າງນ້ອຍ 18 ປີໃນວັນເລືອກຕັ້ງ, ແລະອາໄສຢູ່ໃນລັດມິນນິໂຊຕາຢ່າງນ້ອຍ 20 ວັນ

ຖ້າຫາກທ່ານຖືກຕັດສິນມີໂທດໜັກ ທ່ານສາມາດລົງຄະແນນສຽງໄດ້ຫລັງຈາກທີ່ທ່ານໃຊ້ໂທດຂອງທ່ານໝົດແລ້ວ, ລວມທັງການຝາກໂທດໃດໆ, ການປ່ອຍຕົວອອກຈາກຄຸກແບບມີເງື່ອນໄຂ, ຫຼືເງື່ອນໄຂອື່ນໆ ເຊັ່ນ ການຊົດເຊີຍຄ່າເສຍຫາຍ

ທ່ານສາມາດລົງຄະແນນສຽງໃນຂະນະທີ່ຢູ່ພາຍໃຕ້ການປົກຄອງຜູ້ອື່ນໄດ້ ເວັ້ນເສຍແຕ່ວ່າຜູ້ພິພາກສາໄດ້ຍົກເລີກສິດທິໃນການລົງຄະແນນສຽງຂອງທ່ານ

## *ລົງທະບຽນເພື່ອລົງຄະແນນສຽງ*

ທ່ານຕ້ອງລົງທະບຽນເພື່ອລົງຄະແນນສຽງຕາມທີ່ຢູ່ປັດຈຸບັນຂອງທ່ານ ຖ້າຈະລົງທະບຽນຫຼືປັບປຸງການຈົດທະບຽນຂອງທ່ານ ໃຫ້ໄປທີ່ mnvotes.org

ນອກນັ້ນທ່ານຍັງສາມາດລົງທະບຽນທີ່ສະຖານທີ່ປ່ອນບັດຂອງທ່ານໃນວັນເລືອກຕັ້ງ ທ່ານຕ້ອງສະແດງຫຼັກຖານຊື່ແລະທີ່ຢູ່ໃນປັດຈຸບັນຂອງທ່ານ ສໍາລັບລາຍລະອຽດເພີ່ມເຕີມ ໃຫ້ໄປທີ່ mnvotes.org ຫຼື ໂທ 1-877-600-VOTE

### *ວັນທີຂອງປີ 2020*

**ການເລືອກຕັ້ງຂັ້ນຕົ້ນ**
*ວັນອັງຄານ, ວັນທີ 11 ສິງຫາ*

**ລົງຄະແນນສຽງລ່ວງໜ້າຖ້າທ່ານບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 18 ກັນຍາ ເຖິງ 25 ພຶດສະຈິກາ*

**ລົງທະບຽນເພື່ອລົງຄະແນນສຽງ**
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 13 ຕຸລາ ເພື່ອຊ່ວຍປະຢັດເວລາໃນວັນເລືອກຕັ້ງ*

**ວັນເລືອກຕັ້ງ**
*ວັນອັງຄານ ວັນທີ່3 ເດືອນພຶດສະຈິກາ*

*ມີຕໍ່ຂ້າງຫລັງ...*

*ສໍານັກງານລັດຖະມົນຕີ ລັດມິນນິໂຊຕາ*
*mnvotes.org • 1-877-600-VOTE*

# ວິທີການລົງຄະແນນສຽງ

VOTE 2020

*...ຕໍ່ຈາກຂ້າງໜ້າ*

## *ເບິ່ງບັດລົງຄະແນນສຽງຕົວຢ່າງຂອງທ່ານ*

ເຂົ້າໄປເບິ່ງຜູ້ສະໝັກແລະຄຳຖາມທີ່ຈະຢູ່ໃນບັດລົງຄະແນນສຽງຂອງທ່ານ ໄປທີ່ mnvotes.org

## *ສະຖານທີ່ລົງຄະແນນສຽງແລະເວລາ*

ຊອກຫາບ່ອນທີ່ທ່ານລົງຄະແນນສຽງ ໄປທີ່ mnvotes.org ສະຖານທີ່ເລືອກຕັ້ງສ່ວນຫຼາຍເປີດແຕ່ 7 ໂມງເຊົ້າເຖິງ 8 ໂມງແລງ

## *ສິ່ງທີ່ຕ້ອງເອົາໄປນຳ*

ຖ້າວ່າທ່ານໄດ້ລົງທະບຽນເພື່ອລົງຄະແນນສຽງຢູ່ບ່ອນຢູ່ປັດຈຸບັນຂອງທ່ານ ທ່ານບໍ່ຈຳເປັນຕ້ອງເອົາບັດປະຈຳໂຕມານຳ ຖ້າຫາກວ່າທ່ານຕ້ອງການລົງທະບຽນຫຼືປັ່ງປຸງການຈົດທະບຽນຂອງທ່ານ ທ່ານຈະຕ້ອງໄດ້ສະແດງຫຼັກຖານທີ່ຢູ່ອາໄສຂອງທ່ານໃຫ້ເຫັນກ່ອນທີ່ທ່ານຈະລົງຄະແນນສຽງ ເພື່ອຮຽນຮູ້ເພີ່ມເຕີມ ໃຫ້ໄປທີ່ mnvotes.org ຫຼື ໂທ 1-877-600-VOTE

## *ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

ທ່ານສາມາດລົງຄະແນນສຽງແຕ່ທຳອິດໄດ້ທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນແຕ່ວັນສຸກ ວັນທີ 21 ກັນຍາ ນອກນັ້ນທ່ານຍັງສາມາດສະໝັກຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ສົ່ງໃຫ້ທ່ານທາງໄປສະນີໄດ້ ຊອກຫາຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຫຼືຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ໄປທີ່ mnvotes.org

### *ຢຸດເຮັດວຽກເພື່ອໄປລົງຄະແນນສຽງ*

*ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*